**“ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ ສົ່ງໂທລະເລກອວຍພອນ
ວັນໄຊຊະນະຟົ້ນຣົບດຽນບຽນຟູ ຄົບຮອບ 70 ປີ”**

ເນື່ອງໃນໂອກາດ ວັນໄຊຊະນະດຽນບຽນຟູ ຄົບຮອບ 70 ປີ (7/5/1954 – 7/5/2024), ຄະນະບໍລິຫານງານສູນກາງ ພັກປະຊາຊົນ ປະຕິວັດລາວ ໄດ້ສົ່ງໂທລະເລກອວຍພອນເຖິງ ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໂດຍມີເນື້ອໃນດັ່ງນີ້:

ຄະນະບໍລິຫານງານສູນກາງ ພັກປະຊາຊົນ ປະຕິວັດລາວ ແລະ ປະຊາຊົນລາວບັນດາເຜົ່າ, ພວກຂ້າພະເຈົ້າ ຂໍສົ່ງຄໍາອວຍພອນໄຊອັນປະເສີດ ແລະ ໄມຕີຈິດມິດຕະພາບອັນສະໜິດສະໜົມ ຖານສະຫາຍອ້າຍນ້ອງມາຍັງ ຄະນະບໍລິຫານງານສູນກາງພັກກອມມູນິດ ຫວຽດນາມ ແລະ ປະຊາຊົນຫວຽດນາມອ້າຍນ້ອງທຸກຖ້ວນໜ້າ.

ພາຍຫຼັງການປະຕິວັດເດືອນ ສິງຫາ 1945, ຈັກກະພັດລ່າເມືອງຂຶ້ນຝຣັ່ງ ໄດ້ກັບຄືນມາຮຸກຮານຫວຽດນາມ ກໍ່ຄື ອິນດູຈີນ ຄັ້ງທີ 2, ໂດຍໃຊ້ກໍາລັງປະກອບອາວຸດເປີດບັ້ນຮົບບຸກໂຈມຕີ. ປະຕິບັດແນວທາງການຕໍ່ສູ້ທົ່ວປວງຊົນ, ຮອບດ້ານ, ຍາວນານ, ອີງໃສ່ກໍາລັງແຮງຂອງຕົນເອງເປັນຫຼັກ, ດ້ວຍອາວຸດທີ່ມີ ແລະຈິດໃຈເດັດດ່ຽວຕໍ່ສູ້ຈົນສາມາດຍາດໄດ້ໄຊຊະນະ, ສາມາດຂະຫຍາຍເຂດປົດປ່ອຍ, ອໍານາດການປົກຄອງປະຊາທິປະໄຕປະຊາຊົນ ໄດ້ຮັບການປັບປຸງ, ກໍາລັງປະກອບອາວຸດປະຕິບັດໄດ້ເຕີບໃຫຍ່ເຂັ້ມແຂງ, ສະຖານະການສົງຄາມຢູ່ຫວຽດນາມ ແລະ ອິນດູຈີນ ໄດ້ມີການປ່ຽນແປງຢ່າງຕັ້ງໜ້າ, ພາຍໃຕ້ການນໍາພາອັນສະຫຼາດສ່ອງໃສ ຂອງພັກ, ຂອງປະທານ ໂຮ່ຈີມິນ ຜູ້ນໍາທີ່ຍິ່ງໃຫຍ່, ກອງທັບ ແລະ ປະຊາຊົນຫວຽດນາມ ສາມາດທັບມ້າງບັນດາແຜນການຂອງຈັກກະພັດລ່າເມືອງຂຶ້ນຝຣັ່ງເທື່ອລະກ້າວ ແລະ ໄດ້ສ້າງວິລະກໍາປະຫວັດສາດ, ໄຊຊະນະອັນສະຫວ່າງສະໄຫວ ແລະ ລືຊື່ ໃນບັ້ນຮົບດຽນບຽນຟູ ປີ 1954. ບົນຈິດໃຈ “ທຸກສິ່ງເພື່ອບັ້ນຮົບ”, “ທຸກຢ່າງເພື່ອແນວໜ້າ”, “ທັງໝົດເພື່ອໄຊຊະນະ”, ດ້ວຍກໍາລັງແຮງຂອງມະຫາສາມັກຄີທົ່ວປວງຊົນ ເປັນຈິດໜຶ່ງໃຈດຽວທັງຊາດ, ສຸມກໍາລັງຄົນ, ກໍາລັງວັດຖຸສິ່ງຂອງໃຫ້ແກ່ບັ້ນຮົບດຽນບຽນຟູ ແລະ ສົມທົບກັບກໍາລັງແຮງຂອງຍຸກສະໄໝ, ການສະໜັບສະໜູນ, ຊ່ວຍເຫຼືອຂອງບັນດາປະເທດສັງຄົມນິຍົມ ແລະ ປະຊາຊົນຜູ້ກ້າວໜ້າ, ຮັກຫອມສັນຕິພາບຢູ່ໃນໂລກ ແລະ ອິນດູຈີນ, ກອງທັບ ແລະ ປະຊາຊົນຫວຽດນາມ ໄດ້ດໍາເນີນບັ້ນຮົບດຽນບຽນຟູທີ່ດຸເດືອດ, ຂ້ຽວຂາດ, ຕໍ່ສູ້ຢ່າງພິລະອາດຫານ ເພື່ອຍາດເອົາໄຊຊະນະ ທີ່ຕັດສິນຊີ້ຂາດ ນໍາເອົາຂະບວນການຕໍ່ສູ້ຕ້ານຈັກກະພັດຂອງປະຊາຊົນຫວຽດນາມ ໄປສູ່ໄຊຊະນະຢ່າງສົມບູນ.

ໄຊຊະນະບັ້ນຮົບດຽນບຽນຟູ ພ້ອມກັບໄຊຊະນະໃນບັ້ນຮົບຕ່າງໆ ໃນໄລຍະປີ 1953 – 1954 ໄດ້ສ້າງເງື່ອນໄຂສະພາບແວດລ້ອມທີ່ເອື້ອອໍານວຍ ແລະ ທ່າໄດ້ປຽບໃນການເຈລະຈາ ແລະ ກ້າວໄປເຖິງການເຊັນສັນຍາເຊີແນວ ຢຸດຕິສົງຄາມ ແລະ ຟື້ນຟູສັນຕິພາບຢູ່ 3 ປະເທດອິນດູຈີນ: ຫວຽດນາມ, ລາວ, ກໍາປູເຈຍ ບົນພື້ນຖານເຄົາລົບເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງແຕ່ລະປະເທດ. ຄຽງຄູ່ກັນນັ້ນ

ພາກເໜືອຫວຽດນາມ ກໍ່ໄດ້ຮັບການປົດປ່ອຍຢ່າງສົມບູນ ກ້າວຂຶ້ນສູ່ສັງຄົມນິຍົມ ອັນໄດ້ກາຍເປັນກຳລັງແຮງຊຸກຍູ້ອັນໃຫຍ່ຫຼວງ ໃຫ້ແກ່ພາລະກິດຕໍ່ສູ້ປົດປ່ອຍພາກໃຕ້ ແລະ ທ້ອນໂຮມປະເທດຊາດ ໄດ້ຢ່າງມີໄຊ.

ພັກກອມມູນິດຫວຽດນາມ ທີ່ມີກຽດສະຫງ່າ ໄດ້ສືບຕໍ່ນຳພາປະຊາຊົນຫວຽດນາມ ຜ່ານຜ່າບັນດາຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍທົດສອບນາໆປະການ ໂດຍສະເພາະໃນເງື່ອນໄຂສະພາບການພາກພື້ນ ແລະ ສາກົນກຳລັງຜັນແປໄປຢ່າງສະຫຼັບສັບຊ້ອນໃນປັດຈຸບັນ, ສ້າງສາພັດທະນາປະເທດ ເພື່ອຄວາມສົມບູນພູນສຸກຂອງປະຊາຊົນ, ປົກປັກຮັກສາໝາກຜົນຂອງການປະຕິວັດ ໄວ້ໄດ້ຢ່າງໝັ້ນຄົງ ແລະ ປະຕິບັດແນວທາງການປ່ຽນແປງ ໃໝ່ ເພື່ອນຳເອົາປະເທດ ກ້າວຂຶ້ນຕາມທິດສັງຄົມນິຍົມຢ່າງໜັກແໜ້ນ ໂດຍສາມາດຍາດໄດ້ຜົນສຳເລັດອັນເປັນພື້ນຖານ ແລະ ຮອບດ້ານ, ອັນໄດ້ເຮັດໃຫ້ ສສ ຫວຽດນາມ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກ ແໜ້ນ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງ, ເສດຖະກິດມີການຂະຫຍາຍຕົວດ້ວຍຈັງຫວະສູງ ແລະ ຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງດີຂຶ້ນ, ການພົວພັນຮ່ວມມື ແລະ ເຊື່ອມໂຍງສາກົນໄດ້ຮັບການເປີດກວ້າງ, ບົດບາດອິດທິພົນຂອງພັກກອມມູນິດຫວຽດນາມ, ສາທາ ລະນະລັດ ສັງຄົມນິຍົມຫວຽດນາມ ນັບມື້ນັບສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ໄຊຊະນະບັ້ນຮົບ ດຽນບຽນຟູ ປີ 1954 ເປັນໜຶ່ງໃນບັນດາມະຫາໄຊຊະນະຂອງ ພັກ, ກອງທັບ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ໃນພາລະກິດຕໍ່ສູ້ຕ້ານພວກລ່າເມືອງຂຶ້ນ, ຈັກກະພັດຜູ້ຮຸກຮານ, ເປັນສັນຍາລັກຂອງການປະສານສົມທົບຕໍ່ສູ້ ລະຫວ່າງ ປະຊາຊົນ, ກຳລັງປະກອບອາວຸດ ຂອງ ຫວຽດນາມ ແລະ ລາວ, ເປັນກຳລັງແຮງອັນມະຫາສານຊຸກຍູ້ ຂະບວນການຕໍ່ສູ້ປົດປ່ອຍຊາດ ຂອງພັກ ແລະ ປະຊາຊົນລາວບັນດາເຜົ່າສຳເລັດຜົນຢ່າງມີໄຊ. ພວກຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງ ແລະ ຄວາມຂອບອົກຂອບໃຈຢ່າງຈິງໃຈມາຍັງ ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ທີ່ໄດ້ໃຫ້ການຊ່ວຍເຫຼືອອັນໃຫຍ່ຫຼວງ, ລ້ຳຄ່າມີປະສິດທິຜົນ ແລະ ທັນການແກ່ພາລະກິດການປະຕິວັດຂອງລາວໃນເມື່ອກ່ອນ ກໍ່ຄື ໃນໄລຍະປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປະຈຸບັນ.

ອີກເທື່ອໜຶ່ງ, ພວກຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍຢ່າງສຸກອົກສຸດໃຈ ຕໍ່ບັນດາໄຊຊະນະ ແລະ ຜົນງານອັນໃຫຍ່ຫຼວງ, ຮອບດ້ານທີ່ ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ຍາດມາໄດ້ຕະຫຼອດໄລຍະທີ່ຜ່ານມາ ແລະ ເຊື່ອໝັ້ນຢ່າງໜັກແໜ້ນວ່າ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງພັກກອມມູນິດຫວຽດນາມ ໂດຍມີ ສະຫາຍເລຂາທິການໃຫຍ່ ຫງວຽນຟູຈ້ອງ ເປັນຜູ້ນຳໜ້ານັ້ນ, ພັກ, ລັດຖະບານ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ຈະສືບຕໍ່ຍາດໄດ້ຜົນສຳເລັດໃໝ່ ໃຫຍ່ຫຼວງກວ່າເກົ່າ ໃນການປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກໄດ້ຢ່າງມີໄຊ ໃນການຫັນປະເທດເປັນອຸດສາຫະກຳຕາມທິດທັນສະໄໝ ແລະ ບັນລຸເປົ້າໝາຍ ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ປະຊາທິປະໄຕ, ຍຸຕິທຳ, ສີວິໄລ.

ຂໍອວຍພອນໃຫ້ ສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ຈົ່ງໝັ້ນຄົງຂະໜົງແກ່ນ ແລະ ສວຍສົດງົດງາມຕະຫຼອດໄປ.

ໃນໂອກາດດຽວກັນນີ້, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປະຕິວັດລາວ ກໍ່ໄດ້ສົ່ງໂທລະເລກອວຍພອນ ເຖິງ ສະຫາຍ ເລຮວາຍຈຸງ,ເລຂາທິການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຫວຽດນາມ ເຊັ່ນດຽວກັນ.